ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 224/ລບ

ນະຄອນຫຼວງວຽງຈັນ, ວັນທີ 19/07/2019.

# ດຳລັດ
# ວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 201/ທຫລ, ລົງວັນທີ 27 ພຶດສະພາ 2019.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ຮັບປະກັນຫຼຸດຜ່ອນຄວາມສ່ຽງສິນເຊື່ອຂອງສະຖາບັນການເງິນ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນ ແນໃສ່ຮັກສາສະຖຽນລະພາບທາງດ້ານການເງິນ ແລະ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາໃຫ້ມີຄວາມໝັ້ນທ່ຽງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ວຽກງານຂໍ້ມູນຂ່າວສານສິນເຊື່ອ**

ວຽກງານຂໍ້ມູນຂ່າວສານສິນເຊື່ອ ແມ່ນການເຄື່ອນໄຫວເກັບກຳ, ກວດກາ, ເກັບຮັກສາ, ສ້າງຜະລິດຕະພັນ, ສະໜອງ ແລະ ການແກ້ໄຂຂໍ້ມູນຂ່າວສານສິນເຊື່ອ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍລິສັດເຊົ່າສິນເຊື່ອ ແລະ ສະຖາບັນການເງິນອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. **ຂໍ້ມູນຜິດພາດ** ໝາຍເຖິງ ຂໍ້ມູນຂ່າວສານສິນເຊື່ອທີ່ບໍ່ຖືກຕ້ອງຕາມແບບພິມລາຍງານຂໍ້ມູນຂ່າວສານສິນເຊື່ອ ຫຼື ບໍ່ຖືກຕ້ອງຕາມຄວາມເປັນຈິງ;

3. **ລູກຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີການພົວພັນສິນເຊື່ອນຳສະຖາບັນການເງິນ ຫຼື ໃຊ້ບໍລິການສາທາລະນູປະໂພກ;

4. **ພາລະຜູກພັນທາງການເງິນ** ໝາຍເຖິງ ຂໍ້ຜູກພັນໃນສັນຍາທີ່ສະຖາບັນການເງິນ ໄດ້ຕົກລົງກັບລູກຄ້າໃນຮູບແບບ ວົງເງິນສິນເຊື່ອ, ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ, ໜັງສືຮັບຮອງການຈ່າຍເງິນ ແລະ ອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ**

ລັດ ຊຸກຍູ້, ສົ່ງເສີມວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ສ້າງເງື່ອນໄຂໃຫ້ທຸກພາກສ່ວນ ມີສ່ວນຮ່ວມ ໃນການພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອຮັບປະກັນການສະໜອງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອໃຫ້ຖືກຕ້ອງ ຄົບຖ້ວນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ**

ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

2. ຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ;

3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ.

**ມາດຕາ 6 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ ວິຊາການ, ພັດທະນາບຸກຄະລາກອນ ເພື່ອພັດທະນາວຽກງານດັ່ງກ່າວໃຫ້ມີຄວາມທັນສະໄໝ, ເຂັ້ມແຂງ ແລະ ໜັກແໜ້ນ.

## ໝວດທີ 2
## ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ

**ມາດຕາ 8 ຂໍ້ມູນຂ່າວສານສິນເຊື່ອ**

ຂໍ້ມູນຂ່າວສານສິນເຊື່ອ ແມ່ນຂໍ້ມູນເງິນກູ້, ພາລະຜູກພັນທາງການເງິນ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງຂອງລູກຄ້ານຳສະຖາບັນການເງິນ, ນິຕິບຸກຄົນອື່ນ ແລະ ການຈັດຕັ້ງ ຊຶ່ງລູກຄ້າມີພັນທະໃນການຊຳລະໜີ້ ຕໍ່ສະຖາບັນການເງິນ, ນິຕິບຸກຄົນ ແລະ ການຈັດຕັ້ງນັ້ນ.

ຂໍ້ມູນຂ່າວສານສິນເຊື່ອ ປະກອບມີ ດັ່ງນີ້:

1. ຂໍ້ມູນລູກຄ້າທີ່ເປັນບຸກຄົນ ເຊັ່ນ ບັດປະຈຳຕົວ ແລະ ປຶ້ມທະບຽນສຳມະໂນຄົວ ຫຼື ໜັງສືຜ່ານແດນ;
2. ຂໍ້ມູນລູກຄ້າທີ່ເປັນນິຕິບຸກຄົນ ເຊັ່ນ ໃບທະບຽນວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນ;
3. ຂໍ້ມູນສັນຍາເງິນກູ້ ຫຼື ບັດສິນເຊື່ອ ເຊັ່ນ ວົງເງິນອະນຸມັດ, ວັນເດືອນປີເຊັນສັນຍາ, ວັນເດືອນປີໝົດສັນຍາ, ໄລຍະເວລາກູ້ຢືມ, ອັດຕາດອກເບ້ຍ, ຍອດເຫຼືອໜີ້, ປະເພດເງິນກູ້, ຈັດຊັ້ນໜີ້ເງິນກູ້ ແລະ ສະຖານະພາບເງິນກູ້;
4. ຂໍ້ມູນສັນຍາຄ້ຳປະກັນ ເຊັ່ນ ອາຄານ, ທີ່ດິນ ແລະ ເຮືອນ, ເງິນໃນບັນຊີ, ເອກະສານມີຄ່າ, ເຄື່ອງຈັກ ແລະ ອຸປະກອນ, ໂຄງການ, ພາຫະນະ, ຜູ້ຄ້ຳປະກັນ ທີ່ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ປະກັນໄພ;
5. ຂໍ້ມູນເອກະສານລາຍງານການເງິນ ເຊັ່ນ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ;
6. ຂໍ້ມູນສາທາລະນູປະໂພກ ເຊັ່ນ ຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າໂທລະສັບ, ຄ່າປະກັນໄພ;
7. ຂໍ້ມູນອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 9 ເປົ້າໝາຍການນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ**

ຂໍ້ມູນຂ່າວສານສິນເຊື່ອ ນຳໃຊ້ໃນເປົ້າໝາຍ ດັ່ງນີ້:

1. ການວາງນະໂຍບາຍຂອງລັດຖະບານ ໃນການພັດທະນາເສດຖະກິດ;
2. ການບໍລິຫານ, ການຄຸ້ມຄອງ, ການກວດກາ ແລະ ການກຳນົດນະໂຍບາຍການເງິນ-ເງິນຕາ;
3. ການສຳຫຼວດ, ສ້າງສະຖິຕິ ແລະ ສ້າງຕົວຊີ້ວັດທາງດ້ານການເງິນ-ເສດຖະກິດ;
4. ການຕີລາຄາປະເມີນລູກຄ້າ;
5. ການຄຸ້ມຄອງຄວາມສ່ຽງສິນເຊື່ອ ແລະ ການດຳເນີນທຸລະກິດອື່ນ;
6. ການກວດກາຂໍ້ມູນກ່ຽວກັບຕົນເອງ;
7. ເປົ້າໝາຍອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 10 ການເກັບກຳຂໍ້ມູນ**

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເປັນຜູ້ເກັບກຳຂໍ້ມູນຂ່າວສານສິນເຊື່ອ ຈາກສະມາຊິກ ແລະ ຜູ້ກ່ຽວຂ້ອງ ຕາມແບບພິມທີ່ໄດ້ກຳນົດໄວ້. ພາຍຫຼັງເກັບກຳຂໍ້ມູນ ຫຼື ໄດ້ຮັບຂໍ້ມູນຂ່າວສານສິນເຊື່ອ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງກວດກາຂໍ້ມູນດັ່ງກ່າວ ໂດຍນໍາໃຊ້ລະບົບເຕັກໂນໂລຊີ ແລະ ເຕັກນິກວິຊາການໃນການກັ່ນຕອງ, ແກ້ໄຂຂໍ້ມູນໃຫ້ຖືກຕ້ອງ, ຄົບຖ້ວນ ແລ້ວບັນທຶກເຂົ້າຖານຂໍ້ມູນ.

ສະມາຊິກ ແລະ ຜູ້ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການສະໜອງຂໍ້ມູນ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນແຕ່ລະໄລຍະ ຫຼື ຕາມການຮຽກຮ້ອງຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ.

## ມາດຕາ 11 ການຮັກສາຂໍ້ມູນຂ່າວສານສິນເຊື່ອ

ຂໍ້ມູນຂ່າວສານສິນເຊື່ອ ຕ້ອງເກັບຮັກສາໄວ້ໃນຖານຂໍ້ມູນທີ່ໄດ້ມາດຕະຖານຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ແລະ ສໍາຮອງຂໍ້ມູນ ເພື່ອຮັບປະກັນຄວາມປອດໄພ ແລະ ຕໍ່ເນື່ອງໃນການສະໜອງຂໍ້ມູນດັ່ງກ່າວ.

ຂໍ້ມູນຂ່າວສານສິນເຊື່ອ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ສິບ ປີ ນັບແຕ່ວັນທີ່ຂໍ້ມູນໄດ້ຮັບການຈັດເກັບ ຫຼື ປັບປຸງຄັ້ງສຸດທ້າຍເປັນຕົ້ນໄປ.

## ມາດຕາ 12 ການສ້າງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງສ້າງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ປະກອບມີ:

1. ບົດລາຍງານຂໍ້ມູນສິນເຊື່ອ;
2. ບົດລາຍງານຄະແນນສິນເຊື່ອ;
3. ບົດລາຍງານກວດກາ, ຕິດຕາມຂໍ້ມູນສິນເຊື່ອ;
4. ບົດລາຍງານສັງລວມຂໍ້ມູນສິນເຊື່ອ;
5. ບົດລາຍງານສະເພາະດ້ານໃນການວິເຄາະຕະຫຼາດ;
6. ບົດລາຍງານການລົ້ມລະລາຍ;
7. ບົດລາຍງານການແຈ້ງເຕືອນລ່ວງໜ້າ;
8. ບົດລາຍງານອື່ນ ຕາມການກໍານົດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

## ມາດຕາ 13 ການສະໜອງຂໍ້ມູນຂ່າວສານສິນເຊື່ອ

ການສະໜອງຂໍ້ມູນຂ່າວສານສິນເຊື່ອ ແມ່ນການສະໜອງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງດໍາລັດສະບັບນີ້ ໃຫ້ສະມາຊິກ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມການສະເໜີ.

ການສະໜອງຂໍ້ມູນ ຕ້ອງປະຕິບັດຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ວາງອອກ.

## ມາດຕາ 14 ການແກ້ໄຂຂໍ້ມູນຜິດພາດ

ສະມາຊິກ ຕ້ອງຮັບຜິດຊອບແກ້ໄຂຂໍ້ມູນຂ່າວສານສິນເຊື່ອ ທີ່ສິ່ງບໍ່ຖືກຕ້ອງຕາມແບບພິມລາຍງານຂໍ້ມູນຂ່າວສານສິນເຊື່ອ ແລ້ວລາຍງານໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພາຍໃນເວລາ ຫ້າ ວັນລັດຖະການ.

ໃນກໍລະນີບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພົບເຫັນຂໍ້ມູນຂ່າວສານສິນເຊື່ອບໍ່ໄດ້ຄຸນນະພາບ ຕ້ອງແຈ້ງໃຫ້ສະມາຊິກເພື່ອປັບປຸງແກ້ໄຂຂໍ້ມູນນັ້ນໃຫ້ຖືກຕ້ອງ ແລ້ວລາຍງານໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພາຍໃນເວລາ ຫ້າ ວັນລັດຖະການ.

ໃນກໍລະນີສະມາຊິກໃດໜຶ່ງ ພົບເຫັນຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້າຕົນທີ່ຢູ່ນໍາສະມາຊິກອື່ນ ຫຼື ຜູ້ກ່ຽວຂ້ອງ ບໍ່ຖືກຕ້ອງ ຕ້ອງແຈ້ງໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເປັນລາຍລັກອັກສອນ ເພື່ອປະສານກັບສະມາຊິກອື່ນ ຫຼື ຜູ້ກ່ຽວຂ້ອງດັ່ງກ່າວ ດໍາເນີນການແກ້ໄຂ.

ຜູ້ກ່ຽວຂ້ອງ ຫາກພົບເຫັນວ່າຂໍ້ມູນຂ່າວສານສິນເຊື່ອຕົນທີ່ໄດ້ລາຍງານ ບໍ່ຖືກຕ້ອງ, ຜິດພາດ ຕ້ອງລາຍງານໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຫຼື ສະມາຊິກຂອງບໍລິສັດດັ່ງກ່າວ ທີ່ຕົນມີສາຍພົວພັນທາງສັນຍານໍາ ເພື່ອແກ້ໄຂຂໍ້ມູນດັ່ງກ່າວ ພາຍໃນເວລາ ຫ້າ ວັນລັດຖະການ.

## ໝວດທີ 3
## ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

### ມາດຕາ 15 ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນວິສາຫະກິດໜຶ່ງ ທີ່ຖືກສ້າງຕັ້ງຂຶ້ນດ້ວຍການຮ່ວມທຶນຂອງລັດ ແລະ ນິຕິບຸກຄົນ ຊຶ່ງເຄື່ອນໄຫວພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 16 ໂຄງປະກອບການຈັດຕັ້ງ

ບໍລິສັດຂໍ້ມູນຂ່າວສານເຊື່ອແຫ່ງ ສປປ ລາວ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນ;
2. ສະພາບໍລິຫານ;
3. ອໍານວຍການ;
4. ກົງຈັກຊ່ວຍວຽກ ທີ່ປະກອບດ້ວຍພະແນກ ແລະ ຂະແໜງຈໍານວນໜຶ່ງ.

### ມາດຕາ 17 ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຊຶ່ງໄຂຂຶ້ນຢ່າງໜ້ອຍ ປີລະຄັ້ງ ຕາມການສະເໜີຂອງສະພາບໍລິຫານ ຫຼື ຜູ້ຖືຮຸ້ນ ຢ່າງໜ້ອຍ ສອງສ່ວນສາມ ຂອງຜູ້ຖືຮຸ້ນທັງໝົດ.

### ມາດຕາ 18 ສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາກົດລະບຽບພາຍໃນຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;
2. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ;
3. ຮັບຮອງເອົາການແຕ່ງຕັ້ງຜູ້ອໍານວຍການ ຕາມການສະເໜີຂອງສະພາບໍລິຫານ;

4. ຮັບຮອງເບ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ ແລະ ນະໂຍບາຍຕ່າງໆ ສຳລັບຜູ້ບໍລິຫານ ຕາມການສະເໜີຂອງສະພາບໍລິຫານ;

5. ຮັບຮອງບົດສະຫຼຸບ, ແຜນດຳເນີນງານປະຈຳປີ ແລະ ບົດລາຍງານຜົນການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;

6. ຮັບຮອງການແບ່ງເງິນປັນຜົນ, ການສ້າງຄັງຕ່າງໆ ຕາມການສະເໜີຂອງສະພາບໍລິຫານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສະພາບໍລິຫານ**

ສະພາບໍລິຫານ ມີສະມາຊິກຢ່າງໜ້ອຍ ຫ້າ ຄົນ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຜູ້ຖືຮຸ້ນ. ສະພາບໍລິຫານມີອາຍຸການ ສາມ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້. ສະພາບໍລິຫານ ເຄື່ອນໄຫວວຽກງານ ຕາມລະບອບປະຊຸມ ຊຶ່ງໄຂຂຶ້ນຢ່າງໜ້ອຍ ສາມ ເດືອນຕໍ່ຄັ້ງ. ໃນກໍລະນີຈຳ ເປັນສາມາດເປີດກອງປະຊຸມສະໄໝວິສາມັນໄດ້ ຕາມການຮຽກໂຮມຂອງປະທານ ຫຼື ສະມາຊິກຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງສະມາຊິກທັງໝົດ.

**ມາດຕາ 20 ເງື່ອນໄຂຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄວາມສາມາດທາງດ້ານການປະພຶດ;

2. ມີຄວາມຮູ້ຄວາມສາມາດ ແລະ ປະສົບການທາງດ້ານບໍລິຫານຈັດການ, ການເງິນ-ການທະນາຄານ ຫຼື ກົດໝາຍ;

3. ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;

4. ບໍ່ເຄີຍຖືກປົດອອກຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;

5. ຖ້າແມ່ນຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ຕ້ອງໄດ້ພົ້ນຈາກໜ້າທີ່ຢ່າງໜ້ອຍ ໜຶ່ງ ປີ ກ່ອນຖືກແຕ່ງຕັ້ງເປັນສະມາຊິກສະພາບໍລິຫານ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຮັບຮອງ ການສ້າງ ແລະ ການດັດແກ້ ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ບົດລາຍງານປະຈຳປີ ຕາມການສະເໜີຂອງຜູ້ອຳນວຍການ;

2. ຮັບຮອງກົດລະບຽບ ແລະ ນິຕິກຳກ່ຽວກັບວຽກງານບໍລິຫານ ແລະ ວິຊາການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕາມການສະເໜີຂອງຜູ້ອຳນວຍການ;

3. ພິຈາລະນາຮັບຮອງເອົາຜະລິດຕະພັນ ແລະ ການກຳນົດຄ່າບໍລິການ;

4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ອຳນວຍການ ແລ້ວສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;

5. ຮັບຮອງເອົາການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ແລະ ກົງຈັກຊ່ວຍວຽກ ຕາມການສະເໜີຂອງຜູ້ອຳນວຍການ;

6. ຮັບຮອງເອົາການຈ້າງຜູ້ກວດສອບພາຍນອກ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ອຳນວຍການ**

ຜູ້ອຳນວຍການ ຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

ຜູ້ອຳນວຍການ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍສະພາບໍລິຫານ, ມີອາຍຸການ ສາມ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້. ຜູ້ອຳນວຍ ສາມາດມີຮອງຜູ້ອຳນວຍການ ຈຳນວນໜຶ່ງ ເປັນຜູ້ຊ່ວຍວຽກ.

ຮອງຜູ້ອຳນວຍການ ມີໜ້າທີ່ຊ່ວຍຜູ້ອຳນວຍການໃນການບໍລິຫານວຽກງານຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທັງເປັນຜູ້ຮັກສາການແທນ ໃນກໍລະນີທີ່ຜູ້ອຳນວຍການຕິດຂັດ ຕາມການມອບໝາຍຂອງຜູ້ອຳນວຍການ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ**

ຜູ້ອຳນວຍການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິກອງປະຊຸມສະພາບໍລິຫານ;
2. ສະເໜີແຜນຍຸດທະສາດ, ແຜນການ, ແຜນງານ, ບົດລາຍງານປະຈຳປີ ແລະ ນິຕິກຳ ໃຫ້ສະພາບໍລິຫານ ພິຈາລະນາຮັບຮອງ;
3. ຄົ້ນຄວ້າສ້າງຜະລິດຕະພັນ ແລະ ຄ່າບໍລິການ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ແລະ ກົງຈັກຊ່ວຍວຽກ ແລ້ວສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;
5. ເປັນຕົວແທນໃນການເຊັນສັນຍາ ແລະ ເອກະສານທາງການຕ່າງໆ ຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;
6. ໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ແກ່ສະມາຊິກ, ຜູ້ກ່ຽວຂ້ອງ ແລະ ພາກສ່ວນອື່ນ;
7. ພິຈາລະນາການເຂົ້າເປັນສະມາຊິກຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;
8. ຄົ້ນຄວ້າກ່ຽວກັບການຍ້ອງຍໍ ຫຼື ການລົງວິໄນ ຕໍ່ພະນັກງານຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;
9. ຄົ້ນຄວ້າກ່ຽວກັບ ການຍ້ອງຍໍ ຫຼື ປະຕິບັດມາດຕະການຕໍ່ຜູ້ລະເມີດຂອງສະມາຊິກບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລ້ວສະເໜີຕໍ່ສະພາບໍລິຫານ;
10. ສະໜອງຂໍ້ມູນ ແລະ ຊີ້ແຈງບັນຫາ ຕໍ່ສະພາບໍລິຫານ ແລະ ຜູ້ກວດສອບພາຍນອກ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4

## ການເງິນ, ການບັນຊີ ແລະ ການລາຍງານ

**ມາດຕາ 24 ທຶນຈົດທະບຽນຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ**

ທຶນຈົດທະບຽນຕ່ຳສຸດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີຈຳນວນ ຊາວຕື້ ກີບ. ທຶນດັ່ງກ່າວ ສາມາດເພີ່ມ ຂຶ້ນໄດ້ໃນແຕ່ລະໄລຍະ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ. ການປະກອບທຶນ ສາມາດປະກອບເປັນວັດຖຸເຕັກນິກ ແລະ ເງິນສົດ ຊຶ່ງເງິນສົດ ຕ້ອງປະກອບບໍ່ໃຫ້ຫຼຸດ ສິບສ່ວນຮ້ອຍ ຂອງຈຳນວນທຶນຈົດທະບຽນ.

**ມາດຕາ 25 ລາຍຮັບ-ລາຍຈ່າຍ**

ລາຍຮັບ-ລາຍຈ່າຍ ຂອງບໍລິສັດຂໍ້ມູນຂ່າວສິນເຊື່ອແຫ່ງ ສປປ ລາວ ມີດັ່ງນີ້:

1. ລາຍຮັບ ປະກອບດ້ວຍ:
   - ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ;
   - ລາຍຮັບດອກເບ້ຍ;
   - ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.
2. ລາຍຈ່າຍ ປະກອບດ້ວຍ:
   - ຄ່າໃຊ້ຈ່າຍບໍລິຫານ ແລະ ວິຊາການ;
   - ຄ່າສ້ອມແປງ ແລະ ບຳລຸງຮັກສາ;
   - ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຊັບສິນ;
   - ຄ່າທຳນຽມ ແລະ ຄ່າບໍລິການ;
   - ຄ່າໂຄສະນາ ແລະ ປະຊາສຳພັນ;
   - ລາຍຈ່າຍດອກເບ້ຍ;
   - ລາຍຈ່າຍອື່ນ.

ສະພາບໍລິຫານ ເປັນຜູ້ຮັບຮອງເອົາແຜນລາຍຮັບ ແລະ ລາຍຈ່າຍ ຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕາມການສະເໜີຂອງຜູ້ອຳນວຍການ.

**ມາດຕາ 26 ກຳໄລ ແລະ ການຂາດທຶນ**

ກຳໄລຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນສ່ວນຜິດດ່ຽງບວກ ລະຫວ່າງຍອດລາຍຮັບ ແລະ ຍອດລາຍຈ່າຍໃນປີ ຕາມມາດຕາ 25 ຂອງດຳລັດສະບັບນີ້. ກຳໄລສຸດທິ ແມ່ນກຳໄລພາຍຫຼັງທີ່ໄດ້ຫັກອາກອນກຳໄລໃຫ້ລັດແລ້ວ ຊຶ່ງຕ້ອງຫັກເຂົ້າຄັງຂະຫຍາຍທຸລະກິດ, ຄັງສະສົມຕາມລະບຽບການ, ຄັງອື່ນໆ ແລະ ແບ່ງເງິນປັນຜົນ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 27 ການບັນຊີ**

ປີການບັນຊີຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນ ເລີ່ມວັນທີ 1 ເດືອນມັງກອນ ແລະ ສິ້ນສຸດ ວັນທີ 31 ເດືອນທັນວາ ຂອງທຸກໆປີ.

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງປະຕິບັດລະບອບບັນຊີຕາມກົດໝາຍ ແລະ ລະບຽບການບັນຊີ.

ມາດຕາ 28 ການລາຍງານ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງລາຍງານຖານະການເງິນຂອງຕົນ ປະຈຳເດືອນ, ໄຕມາດ ແລະ ປີ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

## ໝວດທີ 5
## ສະມາຊິກຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

**ມາດຕາ 29 ການເຂົ້າເປັນສະມາຊິກ**

ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຕ້ອງເຂົ້າເປັນສະມາຊິກບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ສຳລັບນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ສາມາດສະເໜີເຂົ້າເປັນສະມາຊິກ ຕາມເງື່ອນໄຂທີ່ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

**ມາດຕາ 30 ເງື່ອນໄຂຂອງສະມາຊິກ**

ສະມາຊິກຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີພື້ນຖານໂຄງລ່າງທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອຮັບປະກັນການເຄື່ອນໄຫວວຽກງານການບໍລິການ;
2. ມີລະບຽບການຄຸ້ມຄອງບໍລິຫານຂໍ້ມູນທາງເອເລັກໂຕຣນິກ;
3. ມີບຸກຄະລາກອນທີ່ພຽງພໍ ແລະ ມີຄວາມຮູ້ຄວາມສາມາດກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;
4. ເງື່ອນໄຂອື່ນ ຕາມການກຳນົດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 31 ສິດ ແລະ ພັນທະຂອງສະມາຊິກ**

ສະມາຊິກຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີສິດ ແລະ ພັນທະ ດັ່ງນີ້:

1. ເກັບກຳ, ສະໜອງຂໍ້ມູນ ແລະ ຮັບຜິດຊອບຕໍ່ຄວາມຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ ຕາມແບບພິມລາຍງານຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;
2. ພັດທະນາ ແລະ ປັບປຸງລະບົບເຕັກໂນໂລຊີ ເພື່ອຮອງຮັບໃຫ້ແກ່ລະບົບຂໍ້ມູນຂ່າວສານສິນເຊື່ອຂອງທະນາຄານແຫ່ງ ສປປ ລາວ;
3. ສ້າງລະບຽບການ, ຄູ່ມືໃນການນຳໃຊ້ ແລະ ລາຍງານຂໍ້ມູນຂ່າວສານສິນເຊື່ອ;
4. ກວດກາ, ປັບປຸງ ແລະ ແກ້ໄຂຂໍ້ມູນຜິດພາດ ໃຫ້ທັນຕາມກຳນົດເວລາ;
5. ນຳໃຊ້ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມລະບຽບການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

6. ເສຍຄ່າບໍລິການໃນການນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ຕາມລະບຽບການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

7. ແຕ່ງຕັ້ງພະນັກງານ ຫຼື ໜ່ວຍງານຮັບຜິດຊອບຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອ;

8. ລາຍງານວຽກງານຂໍ້ມູນຂ່າວສານສິນເຊື່ອ ຕາມລະບຽບການ;

9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຄວາມຮັບຜິດຊອບຂອງຜູ້ກ່ຽວຂ້ອງ

**ມາດຕາ 32 ຜູ້ກ່ຽວຂ້ອງ**

ຜູ້ກ່ຽວຂ້ອງ ແມ່ນເຈົ້າຂອງຂໍ້ມູນ, ອົງການຈັດຕັ້ງຂອງລັດ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ທີ່ມີຂໍ້ມູນກ່ຽວຂ້ອງກັບຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້.

**ມາດຕາ 33 ເຈົ້າຂອງຂໍ້ມູນ**

ເຈົ້າຂອງຂໍ້ມູນຂ່າວສານສິນເຊື່ອ ແມ່ນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນລູກຄ້າ ຫຼື ຜູ້ໃຊ້ບໍລິການ ຊຶ່ງສະມາຊິກ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ລາຍງານຂໍ້ມູນຂ່າວສານສິນເຊື່ອຂອງຜູ້ກ່ຽວໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ.

**ມາດຕາ 34 ອົງການຈັດຕັ້ງຂອງລັດ**

ອົງການຈັດຕັ້ງຂອງລັດ ແມ່ນບັນດາຂະແໜງການ ແລະ ອົງການ ທີ່ມີຂໍ້ມູນຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້ ເພື່ອປຽບທຽບກັບຂໍ້ມູນຂ່າວສານສິນເຊື່ອ ທີ່ໄດ້ຈາກສະມາຊິກ.

**ມາດຕາ 35 ນິຕິບຸກຄົນ ແລະ ການຈັດຕັ້ງ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ແມ່ນຜູ້ທີ່ໄດ້ຮັບອະນຸຍາດໃຫ້ບໍລິການດ້ານສາທາລະນູປະໂພກ ເປັນຕົ້ນການບໍລິການໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ປະກັນໄພ.

**ມາດຕາ 36 ຄວາມຮັບຜິດຊອບຂອງເຈົ້າຂອງຂໍ້ມູນ**

ເຈົ້າຂອງຂໍ້ມູນຂ່າວສານສິນເຊື່ອ ມີຄວາມຮັບຜິດຊອບ ດັ່ງນີ້:

1. ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

2. ສະເໜີບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເພື່ອແກ້ໄຂ ໃນກໍລະນີຂໍ້ມູນຂອງຕົນບໍ່ຖືກຕ້ອງ ຫຼື ຜິດພາດ;

3. ສະໜອງຂໍ້ມູນຂ່າວສານສິນເຊື່ອຂອງຕົນໃຫ້ແກ່ສະມາຊິກ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ;

4. ອະນຸຍາດຢ່າງເປັນລາຍລັກອັກສອນໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເກັບກໍາ ແລະ ເປີດເຜີຍຂໍ້ມູນຂ່າວສານສິນເຊື່ອຂອງຕົນ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຄວາມຮັບຜິດຊອບຂອງອົງການຈັດຕັ້ງຂອງລັດ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ອົງການຈັດຕັ້ງຂອງລັດ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນຂ່າວສານສິນເຊື່ອ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

2. ນໍາໃຊ້ຂໍ້ມູນຂ່າວສານສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

3. ໃຫ້ການຮ່ວມມືໃນການປະສານງານ ແລະ ຮັບຜິດຊອບຕໍ່ການສະໜອງຂໍ້ມູນຂ່າວສານສິນເຊື່ອທີ່ກ່ຽວຂ້ອງ;

4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 38 ຂໍ້ຫ້າມສໍາລັບສະມາຊິກ**

ຫ້າມສະມາຊິກ ມີພຶດຕິກໍາ ດັ່ງນີ້:

1. ແລກປ່ຽນຂໍ້ມູນຂ່າວສານສິນເຊື່ອລະຫວ່າງສະມາຊິກດ້ວຍກັນ;

2. ເປີດເຜີຍຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ໃຫ້ເຈົ້າຂອງຂໍ້ມູນ ຫຼື ພາກສ່ວນອື່ນ;

3. ປອມແປງ, ດັດແກ້ເນື້ອໃນ ຂໍ້ມູນຂ່າວສານສິນເຊື່ອ ທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງເຈົ້າຂອງຂໍ້ມູນ;

4. ສະໜອງຂໍ້ມູນຂ່າວສານສິນເຊື່ອທີ່ບໍ່ຖືກຕ້ອງ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

5. ໂຄສະນາຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃສ່ຮ້າຍປ້າຍສີບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທີ່ພາໃຫ້ບຸກຄົນອື່ນເຂົ້າໃຈຜິດ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 39 ຂໍ້ຫ້າມສໍາລັບເຈົ້າຂອງຂໍ້ມູນຂ່າວສານສິນເຊື່ອ**

ຫ້າມເຈົ້າຂອງຂໍ້ມູນຂ່າວສານສິນເຊື່ອ ມີພຶດຕິກໍາ ດັ່ງນີ້:

1. ສະໜອງຂໍ້ມູນຂ່າວສານສິນເຊື່ອທີ່ບໍ່ຖືກຕ້ອງຂອງຕົນ ໃຫ້ແກ່ສະມາຊິກ;

2. ໂຄສະນາຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃສ່ຮ້າຍປ້າຍສີບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທີ່ພາໃຫ້ບຸກຄົນອື່ນເຂົ້າໃຈຜິດ;

3. ປອມແປງ ຫຼື ດັດແກ້ເອກະສານກ່ຽວກັບບົດລາຍງານຂໍ້ມູນຂ່າວສານສິນເຊື່ອ ເພື່ອຜົນປະໂຫຍດຂອງຕົນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 40 ຂໍ້ຫ້າມສຳລັບອົງການຈັດຕັ້ງຂອງລັດ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຫ້າມອົງການຈັດຕັ້ງຂອງລັດ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

2. ປອມແປງ, ດັດແກ້ ເອກະສານ ຫຼື ຂໍ້ມູນ ທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງເຈົ້າຂອງຂໍ້ມູນ;

3. ໂຄສະນາຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃສ່ຮ້າຍປ້າຍສີບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທີ່ພາໃຫ້ບຸກຄົນອື່ນເຂົ້າໃຈຜິດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 41 ຂໍ້ຫ້າມສຳລັບພະນັກງານບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ**

ຫ້າມພະນັກງານບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ປອມແປງ ຫຼື ແກ້ໄຂ ເນື້ອໃນຂໍ້ມູນຂ່າວສານສິນເຊື່ອ ທີ່ສົ່ງຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດຂອງສະມາຊິກ ຫຼື ຜູ້ກ່ຽວຂ້ອງ;

2. ເປີດເຜີຍ, ນຳໃຊ້, ສະໜອງ ຫຼື ແລກປ່ຽນຂໍ້ມູນຂ່າວສານສິນເຊື່ອ ໃຫ້ແກ່ຜູ້ກ່ຽວຂ້ອງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ສວຍໃຊ້ວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອຜົນປະໂຫຍດສ່ວນຕົວ, ສິດ ແລະ ຜົນປະໂຫຍດຂອງສະມາຊິກ ຫຼື ຜູ້ກ່ຽວຂ້ອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 42 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 43 ສິດ ແລະ ໜ້າທີ່ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງ ແຜນຍຸດທະສາດ, ນະໂຍບາຍ ກ່ຽວກັບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ແຜນພັດທະນາລະບົບຂໍ້ມູນຂ່າວສານສິນເຊື່ອ;

2. ຄົ້ນຄວ້າ ສ້າງ ແລະ ອອກນິຕິກຳກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;

3. ຕິດຕາມ, ກວດກາ ການເຄື່ອນໄຫວຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອ;

4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຊຸກຍູ້ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ລັດຖະບານຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**ມາດຕາ 44 ອົງການກວດກາ**

ອົງການກວດກາວຽກງານຂໍ້ມູນຂ່າວສານສິນເຊື່ອ ປະກອບມີ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ແມ່ນອົງການກວດສອບແຫ່ງລັດ.

**ມາດຕາ 45 ເນື້ອໃນການກວດກາ**

ການກວດກາວຽກງານຂໍ້ມູນຂ່າວສານສິນເຊື່ອ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;

2. ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວ ກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;

3. ທຶນ ແລະ ຖານະການເງິນຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

4. ວຽກງານອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 46 ຮູບການກວດກາ**

ການກວດກາວຽກງານຂໍ້ມູນຂ່າວສານສິນເຊື່ອ ມີສາມຮູບການ ດັ່ງນີ້:

1. ແບບປົກກະຕິ;

2. ມີການແຈ້ງລ່ວງໜ້າ;

3. ແບບກະທັນຫັນ.

ການກວດກາປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີການກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ການກວດກາໃຫ້ດຳເນີນທັງການກວດກາເອກະສານ ແລະ ລົງກວດກາຕົວຈິງຢູ່ສະຖານທີ່ປະຕິບັດວຽກງານທີ່ກ່ຽວຂ້ອງ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ແລະ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກແຕ່ລະໄລຍະ.

### ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຈະຖືກລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

### ມາດຕາ 49 ເຄື່ອງໝາຍ ແລະ ກາປະທັບ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີເຄື່ອງໝາຍ ແລະ ກາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ.

### ມາດຕາ 50 ການຈັດຕັ້ງປະຕິບັດ

ມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ.

### ມາດຕາ 51 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ